**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 24 ມົກຣາ 2009 (1-24-2010)**

---

**<u>ປົກປ້ຳກັບວັດຖຸສິ່ງຂອງຫລາຍຢ່າງ:</u>**

**<u>ຂໍ້ພຣະຄັມພີໃນບົດຮຽນ</u>:** (ປັນຍາຈານ 2:4-8; 5:10-16)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>** ບົດຮຽນນີ້ແມ່ນກ່ຽວກັບສະຖານທີ່ ແລະອຳນາດຂອງວັດຖຸສິ່ງຂອງທີ່ທ່ານເປັນເຈົ້າຂອງໃນຊີວິດຂອງພວກທ່ານ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:</u>** ຄົນເອົາຊີວິດແລກປ່ຽນກັບສິ່ງຂອງທີ່ຕົນຊື້ມາ. ພວກເຂົາຕ້ອງຖາມວ່າ ສິ່ງທີ່ຊື້ມາມັນມີຄຸນຄ່າສົມກັບເງິນທີ່ຈ່າຍໃນກຳນົດຂອບເຂດຂອງເວລາທີ່ໄດ້ໃຊ້ໄປນັ້ນຕ້ອງສະສົມມັນ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**
ບົດຮຽນນີ້ສາມາດປ່ຽນແປງທິດທາງຂອງທ່ານໃນການເບິ່ງວັດຖຸສິ່ງຂອງທີ່ທ່ານເປັນເຈົ້າຂອງໂດຍການຊ່ອຍເຫລືອທ່ານໃຫ້ລຽງລຳດັບບ່ອນທີ່ທ່ານສຸມກຳລັງ, ສິ່ງທີ່ທ່ານຄິດວ່າສຳຄັນ, ແລະສິ່ງທີ່ມີຄ່າຢ່າງແທ້ຈິງ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**
1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ……..
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ:</u>** ໃນຫ້ອງຮຽນວັນອາທິດແລ້ວນີ້ ພວກເຮົາສຸມໃຈໃສ່ເຣື່ອງການຕໍ່ສູ້ກັບຄວາມບໍ່ຍຸຕິທັມ. ມື້ນີ້ ພວກເຮົາຈະຮຽນເຣື່ອງການປົກປ້ຳກັບວັດຖຸສິ່ງຂອງຕ່າງໆ ວ່າ ພຣະຄັມພີໄດ້ເວົ້າແນວໃດກ່ຽວກັບສະຖານທີ່ ແລະພລັງອຳນາດຂອງວັດຖຸສິ່ງຂອງການຄອບຄອງຊັບສົມບັດຕ່າງໆໃນຊີວິດຂອງພວກເຮົາ.

- ມີທາງໃດແດ່ທີ່ພວກເຮົາຮູ້ວ່າສັງຄົມຂອງພວກເຮົາທີ່ຫລົ້ນເກມປະເພດດຽວກັນ?
- ແມ່ນຫຍັງທີ່ເປັນການຈູງໃຈໃນການຊື້ ແລະການສະແດງອອກເຖິງວັດຖຸສິ່ງຂອງທີ່ໃຫ້ໄດ້ຫລາຍຂຶ້ນ?
- ໃນຫົວຂໍ້ບົດຮຽນມື້ນີ້ແມ່ນ "ການປົກປ້ຳກັບວັດຖຸສິ່ງຂອງຕ່າງໆ" ຮັ່ງມີບໍ່ແມ່ນບໍ່ດີ ແລະກໍຍັງເປັນການຊ່ອຍດ້ານການດຳຣົງຊີວິດຂອງພວກເຮົາດີຂຶ້ນ. ເຫດຜົນ ແລະການຈູງໃຈສຳລັບການສະສົມ ແລະການໃຊ້ຢ່າງພຽງພໍນັ້ນຄວນເປັນໃນທາງໃດ?

1. **<u>ຂ້າພະເຈົ້າມີສິ່ງຂອງຫລາຍຢ່າງ:</u>** (ປັນຍາຈານ 2:4-8)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ  ປັນຍາຈານ 2:4-8
- ໃຫ້ນັກຮຽນປຽບທຽບເພື່ອໃຫ້ເຫັນຄວາມແຕກຕ່າງໃນການປັກປໍ້າກັບຊັບສິ່ງຂອງທີ່ກະສັດຊາໂລໂມນໄດ້ມີໂດຍຫລາຍໆ ທາງ ມີຫລາຍຄົນທຸກມື້ນີ້ກໍມີຄວາມຈົດຈໍ່ປັກປໍາກັບວັດຖຸສິ່ງຂອງເຊັ່ນກັນ.
- ຄຸນຄ່າຂອງເງິນ, ຄວາມຮັ່ງມີ, ອໍານາດ, ແລະຊື່ສຽງ ເປັນສັນຍາລັກຂອງບົ່ງບອກເຖິງວັທນະທັມຂອງກະສັດຊາໂລໂມນແນວໃດ?
- ຄັ້ງນຶ່ງໃນຊີວິດຂອງລາວ, ກະສັດຊາໂລໂມນໄດ້ເລືອກເອົາສະຕິປັນຍາເໜືອຄວາມຮັ່ງມີ ຫລື ຄວາມປອດພັຍ ( 1 ກະສັດ 3:4-14). ການຕອບສນອງຂອງກະສັດຊາໂລໂມນຕໍ່ການເລືອກຂອງລາວ, ແມ່ນພຣະເຈົ້າໄດ້ຊົງອວຍພອນໃຫ້ລາວເປັນຄົນຮັ່ງມີດ້ວຍວັດຖຸສິ່ງຂອງຢ່າງຫລວງຫລາຍ.
- ພວກເຮົາຈະຊ່ອຍຄົນທັງຫລາຍໃຫ້ເຂົ້າໃຈໃນການທີ່ພວກເຮົາມີຊັບສິ່ງຂອງຫລາຍ ໄວ້ຄຸ້ມຄອງນັ້ນບໍ່ແມ່ນການຈໍາເປັນທີ່ຈະເຮັດໃຫ້ພຣະເຈົ້າພໍພຣະທັຍໄດ້ແນວໃດ?
- ສົນທະນາຄໍາຖາມດັ່ງຕໍ່ໄປນີ້:
  1. ໃນເວລາທ່ານປັດຂີ້ຝຸ່ນແຕ່ລະເທື່ອທ່ານພົບເຄື່ອງທີ່ທ່ານມີແຕ່ບໍ່ໃຊ້ ແລະກໍເກັບໄວ້ໃຫ້ຮົກລຸງລັງເກາະກະນັ້ນມີຫລາຍປານໃດໃນເຮືອນຂອງທ່ານ?
  2. ທ່ານໄດ້ເກັບສະສົມສິ່ງຂອງໄວ້ພາຍໃນປີນຶ່ງໄດ້ຫລາຍປານໃດ?
  3. ທ່ານໄດ້ຫຍັງເພີ້ມຈາກການສະສົມສິ່ງຂອງເຫລົ່ານີ້?
  4. ທ່ານໄດ້ໃຊ້ສິ່ງຂອງທີ່ທ່ານຄຸ້ມຄອງໄວ້ນີ້ ໃຫ້ແກ່ຄົນອື່ນ ເພື່ອຈະໄດ້ພຣະພອນຢູ່ບໍ່?

**<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ປັນຍາຈານ 2:4-8)

1. ມີຈັກເທື່ອຄໍາວ່າ ຂ້າພະເຈົ້າ, ຂອງຂ້າພະເຈົ້າ, ຫລື ຕົວຂອງຂ້າພະເຈົ້າເອງ ທີ່ໃຊ້ຢູ່ໃນຂໍ້ພຣະທັມເຫລົ່ານີ້? ແມ່ນຫຍັງແດ່ທີ່ເວົ້າກ່ຽວກັບຜູ້ຂຽນເຣື່ອງນີ້?
2. ຫລາຍປານໃດຈຶ່ງຈະພຽງພໍຕາມຄວາມຕ້ອງການຂອງມະນຸດ?
3. ແມ່ນຫຍັງທີ່ເຮັດໃຫ້ເຂົາເຈົ້າພໍໃຈ, ຄົນໃດແດ່ທີ່ເຂົາເຈົ້າເພິ່ງພໍໃຈຢ່າງແທ້ຈິງ ແລະແມ່ນຫຍັງທີ່ເຂົາເຈົ້າມີຢູ່?

2. **<u>ຂ້າພະເຈົ້າຢາກໄດ້ເພີ້ມຂຶ້ນ:</u>** (ປັນຍາຈານ 5:10-14)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ  ປັນຍາຈານ 5:10-14
- ໃຫ້ນັກຮຽນບອກເຖິງເຣື່ອງການໂຄສະນາສະແດງສິນຄ້າທີ່ມີຄວາມຈູງໃຈມາຈັກສອງສາມຢ່າງ.
- ພວກເຮົາເປັນຜູ້ບໍຣິໂພກ ແລະທີ່ສໍາຄັນຄືເປັນຜູ້ບອກເຣື່ອງພາກພົນ. ຢ່າງໃດກໍຕາມ, ຫລາຍເທື່ອກໍໃຄວາມຫງຸດຫງິດກັບຂອງຫລິ້ນ ແລະທໍາງານຂ້າງນອກ ໂດຍບໍ່ມີຄວາມເພິ່ງພໍໃຈຕາມທີ່ຕ້ອງການ ຫລື ຄາດໝາຍເອົາໄວ້.
- ພວກເຮົາຈະຮັກສາການໂຄສະນາໃນເຣື່ອງນີ້ໃຫ້ເໝາະສົມໂດຍຢູ່ໃນທັສນະການສິດສອນຂອງພຣະເຈົ້າ.
- ປະຈຸບັນນີ້ບັນຫາການໝູນວຽນຂອງພື້ສິນ ແລະເສຖກິດໄດ້ສະທ້ອນໃຫ້ເຫັນເຖິງສັງຄົມຂອງພວກເຮົາມີສິ່ງຂອງ ເຂົ້າຂອງບໍຣິໂພກເພີ້ມຂຶ້ນຢ່າງໃດ?
- ເຮັດແນວໃດພວກເຮົາຈຶ່ງຈະມີປະຣິມານໃນຄວາມສັມພັນກັບຄົນອື່ນ ແລະກັບພຣະເຈົ້າເພີ້ມຂຶ້ນເໝືອນດັ່ງຣະດັບປະຣິມານຂອງຄົນທົ່ວໄປທີ່ມີຊັບສິ່ງຂອງເຫລົ່ານີ້?

**<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ປັນຍາຈານ 5:10-14)

1. ໃນສ່ວນຕົວຂອງທ່ານ ແມ່ນຫຍັງທີ່ພາໃຫ້ທ່ານດຳເນີນຕໍ່ສິ່ງຂອງເຫລົ່ານີ້?
2. ບາງເທື່ອໃນການດຳເນີນຊີວິດຂອງທ່ານມີຄວາມຮູ້ສຶກວ່າຊີວິດນີ້ເໝືອນກັບເກມໂຊທີ່ລອງເອົາຊະນະທຸກສິ່ງຢູ່ບໍ່?
3. ພວກເຮົາຈະຮຽນຮັກສິ່ງທີ່ຖືກຕ້ອງ ແລະຊອກຫາສິ່ງທີ່ເປັນປໂຍດໃນຊີວິດຢ່າງໃດ?
4. ໃນເມື່ອຜູ້ນຶ່ງຮຽນທີ່ຈະເຊົາສະສົມ ແລະເປັນຄົນທີ່ດີໃຈກັບສິ່ງຂອງທີ່ມີຢູ່ແລ້ວຈະເປັນຢ່າງໃດ?
5. ໃນເວລາຂອງທ່ານທີ່ພຍາຍາມແລ່ນຕາມຊັບສິ່ງຂອງແລ້ວເຮັດໃຫ້ທ່ານມີພລັງມີຈິດໃຈດີຂຶ້ນໃນການໃຊ້ເວລາກັບສິ່ງເຫລົ່ານັ້ນ?
6. ມີສິ່ງໃດແດ່ທີ່ທ່ານຈະປ່ອຍປະໃນການຕິດຕາມສິ່ງຂອງ ແລະຫັນມາຕິດຕາມການສັມພັນກັບຄົນອື່ນ ແລະຕິດຕາມພຣະເຈົ້າຫລາຍຂຶ້ນ?

## 3 . <u>ຂ້າພະເຈົ້າບໍ່ຢາກພາກຈາກຊັບສິ່ງຂອງ ຂອງຂ້າພະເຈົ້າ:</u> (ປັນຍາຈານ 5:15-16)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ປັນຍາຈານ 5:15-16
- ໃຫ້ນັກຮຽນສະແດງເຖິງປໂຍກທີ່ເຂົາເຈົ້າຮູ້ດີທີ່ກ່ຽວພັນກັບຂໍ້ພຣະທັມເຫລົ່ານີ້. (ສິ່ງທີ່ທ່ານເອົາໄປນຳບໍ່ໄດ້)
- ຄວາມຈິງແລ້ວມີຫລາຍສິ່ງທີ່ພວກເຮົາມີ ຫລືຄຸ້ມຄອງຢູ່ນັ້ນບໍ່ມີທາງທີ່ຈະເອົາໄປນຳໄດ້, ແຕ່ເປັນຫຍັງພວກເຮົາຈຶ່ງພຍາຍາມ ດີ້ນຮົນກັບມັນຫລາຍຈົນເຮັດໃຫ້ມັນເປັນຮື້ອກີດຂວາງໃນການຕິດຕາມພຣະເຈົ້າ?
- ມີຫລາຍຢ່າງທີ່ຈະເຮັດໃຫ້ເປັນໄປໄດ້ໃນການດຳຣົງຊີວິດຂອງພວກເຮົາສຳລັບພຣະເຈົ້າຜ່ານເຖິງນິຣັນການ. ການທີ່ພວກຜູ່ອາວຸໂສຈາກໄປໄດ້ຊີ້ໃຫ້ພວກເຮົາເຫັນໄດ້ວ່າ ຄວາມຮັ່ງມີ ຣັຖທັມມະນູນ ຫລືຣະບົບຣະບຽບທີ່ໃຊ້ຢູ່ໃນໂລກນີ້ຈະນຳໄປໃຊ້ໃນຣາຊອານາຈັກຂອງພຣະເຈົ້າກໍບໍ່ໄດ້.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> ປັນຍາຈານ 5:15-16

1. ແມ່ນຫຍັງທີ່ເປັນຂໍ້ດີຂອງການຕໍ່ສູ້ກັບຊັບສົມບັດ?
2. ມີທາງໃດແດ່ທີ່ຈະຕ້ອງຝຶກຝົນໃນການໃຊ້ເວລາ ແລະການສະສົມຊັບສົມບັດໃຫ້ຢູ່ໃນຂອບເຂດ?
3. ທ່ານຈະແບ່ງປັນການແນະນຳຢ່າງນີ້ໃຫ້ກັບຄົນອື່ນແນວໃດ?

## <u>ພຣະຄັມພີແຫ່ງຄວາມຈິງ</u>

- ການມີຊັບສິ່ງຂອງຢ່າງຫລວງຫລາຍທີ່ມີຄວາມໝາຍຢ່າງດີກໍຄື ໃນເມື່ອພວກເຮົາຈະໃຊ້ຊັບສິ່ງຂອງເຫລົ່ານັ້ນເພື່ອພັທນາການຣາຊອານາຈັກຂອງພຣະເຈົ້າ.
- ການເກັບກອງຊັບສິນໄວ້ເປັນຄວາມປາຖນາຊົ່ວຊີວິດດຽວ ແຕ່ຜູ້ດຽວການເກັບກອງໄວ້ຫລາຍ; ມີດີຕໍ່ຊີວິດຢ່າງແນ່ນອນ, ຢ່າງໃດກໍຕາມ, ຈະພົບຢູ່ໃນການຮັບໃຊ້ພຣະເຈົ້າ, ບໍ່ແມ່ນຢູ່ທີ່ການສະສົມສິ່ງຂອງ.
- ເຫັນໄດ້ແລ້ວວ່າ ບໍ່ມີສິ່ງໃດທີ່ພວກເຮົາສາມາດເອົາຊັບສົມບັດຂອງພວກເຮົາໄປກັບພວກເຮົາໄດ້ ເໝືອນກັບວ່າພວກເຮົາໄດ້ໄລ່ຈັບລົມ, ພວກເຮົາຈະພາກຈາກຊັບສົມບັດຂອງພວກເຮົາ ໃຫ້ການຈັດຫາຊັບສົມບັດຂອງພວກເຮົາໄວ້ໃນຣາຊນາຈັກຂອງພຣະເຈົ້າດີກວ່າ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**